

# ມະຕິ
## ກອງປະຊຸມໃຫຍ່ ຄັ້ງທີ IX
## ຂອງອົງຄະນະພັກ ແຂວງອັດຕະປື

---------------------

**ສະເໜີໂດຍ:** ສະຫາຍ ພອນສະໄໝ ມຽງລາວັນ ຄະນະປະຈໍາພັກແຂວງ, ປະທານກວດກາພັກ- ລັດແຂວງ

**ຮຽນ:** ຄະນະປະທານກອງປະຊຸມໃຫຍ່ທີ່ເຄົາລົບ.

**ຮຽນ:** ສະຫາຍ ສົມສະຫວາດ ເລັ່ງສະຫວັດ ກໍາມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຜູ້ປະຈໍາການລັດຖະບານ ທີ່ເຄົາລົບຢ່າງສູງ.

**ຮຽນ:** ບັນດາສະຫາຍຜູ້ແທນ, ແຂກຜູ້ມີກຽດທີ່ນັບຖື ແລະ ຮັກ ແພງ ທັງຫຼາຍ.

ກອງປະຊຸມໃຫຍ່ຜູ້ແທນຄັ້ງທີ IX ຂອງອົງຄະນະພັກແຂວງອັດຕະປື ໄດ້ໄຂຂຶ້ນໃນຕອນເຊົ້າຂອງວັນທີ 22 ພະຈິກ 2010 ທີ່ສະໂມສອນຂອງ ຫ້ອງວ່າການແຂວງ ເຊິ່ງໄດ້ດໍາເນີນເປັນເວລາ 2 ວັນເຄິ່ງ, ມີຜູ້ແທນສົມບູນ ທີ່ມາຈາກຄະນະພັກແຂວງ, ບັນດາຄະນະພັກຮາກຖານກອງບັນຊາການທະຫານ-ກອງບັນຊາການປ້ອງກັນຄວາມສະຫງົບສຸກແຂວງ, ໜ່ວຍພັກພະແນກການອ້ອມຂ້າງແຂວງ ແລະ ຄະນະພັກທີ່ມາຈາກ 5 ເມືອງ ເຂົ້າຮ່ວມທັງໝົດ 157 ສະຫາຍ, ຍິງ 21 ສະຫາຍ, ເຊິ່ງເປັນຕົວແທນໃຫ້ແກ່ສະມາຊິກພັກໃນທົ່ວຂວງ 5.576 ສະຫາຍ ຍິງ 1.157 ສະຫາຍ, ແຂກຖືກເຊີນ 40 ສະຫາຍ, ຍິງ 8 ສະຫາຍ.

ບັນດາສະຫາຍ ຜູ້ແທນເຂົ້າຮ່ວມກອງປະຊຸມ ໄດ້ພ້ອມກັນຍົກສູງຄວາມຮັບຜິດຊອບ ແລະ ສຸມສະຕິປັນຍາຂອງຕົນປະກອບສ່ວນເຮັດໃຫ້ກອງປະຊຸມດໍາເນີນໄປດ້ວຍບັນຍາກາດຟົດຟື້ນ ແລະ ປະສົບຜົນສໍາເລັດຕາມຈຸດປະສົງ ແລະ ລະດັບຄາດໝາຍທີ່ໄດ້ກໍານົດໄວ້. ກອງປະຊຸມໃຫຍ່ ຄັ້ງທີ IX ຂອງອົງຄະນະພັກແຂວງໃນຄັ້ງນີ້ ໄດ້ເປັນເອກະພາບກັນຮັບຮອງເອົາບັນດາເນື້ອໃນທີ່ສໍາຄັນດັ່ງລຸ່ມນີ້:

1. ກອງປະຊຸມໄດ້ພ້ອມກັນຄົ້ນຄ້ວາ ແລະປະກອບຄໍາຄິດຄໍາເຫັນໃສ່ຮ່າງລາຍງານການເມືອງ, ແຜນພັດທະນາເສດຖະກິດ-ສັງຄົມ ແລະ ບົດສໍາຫຼວດການນໍາພາຂອງຄະນະພັກ, ກອງປະຊຸມໄດ້ເປັນເອກະພາບກັນຕີລາຄາດ້ານດີ, ດ້ານອ່ອນ, ຂໍ້ຄົງຄ້າງ, ສາເຫດ ແລະ ບົດຮຽນທີ່ຖອດຖອນໄດ້ຈາກການຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ຄັ້ງທີ VIII. ຜ່ານການຕີລາຄາເຫັນວ່າພວກເຮົາສາມາດຍາດໄດ້ຜົນງານຫຼາຍດ້ານທີ່ເປັນໜ້າພາກພູມໃຈ ເປັນຕົ້ນ: ສາມາດເຮັດໃຫ້ທົ່ວແຂວງມີສະຖຽນລະພາບທາງດ້ານການເມືອງ, ສັງຄົມມີຄວາມເປັນລະບຽບຮຽບຮ້ອຍ ແລະ ມີຄວາມສະຫງົບປອດໄພຢ່າງໜັກແໜ້ນ, ເສດຖະກິດຂະຫຍາຍຕົວຢ່າງຕໍ່ເນື່ອງ, ລວມຍອດຜະລິດຕະພັນພາຍໃນໄດ້ເພີ່ມຂຶ້ນລື່ນຄາດໝາຍຂອງແຜນການສະເລ່ຍ 8,3% ຕໍ່ປີ, (ຄາດໝາຍ 7,5-8%). ລວມຍອດມູນຄ່າຜະລິດຕະພັນພາຍໃນບັນລຸ ໄດ້ 623 ຕື້ກີບ ລາຍຮັບສະເລ່ຍເພີ່ມຂຶ້ນຈາກ 241 USDຕໍ່ຄົນຕໍ່ປີ ໃນ-ປີ 2005 ມາເປັນ 614 USD ຕໍ່ຄົນຕໍ່ປີ ຫຼືເທົ່າກັບ 5 ລ້ານກີບ ໃນປີ 2010. ຄອບຄົວທຸກຍາກຫຼຸດລົງ, ປະຈຸບັນຍັງເຫຼືອ 3.910 ຄອບຄົວ, ກວມເອົາ 18% ຂອງຈານວນຄົວເຮືອນໃນທົ່ວແຂວງ. ໃນຊຸມປີຜ່ານມາພວກເຮົາໄດ້ສຸມໃສ່ການຜະລິດກະສິກໍາກາຍເປັນສິນຄ້າຢ່າງຮອບດ້ານ, ຂະຫຍາຍຫັດຖະກໍາປຸງແຕ່ງ, ການບໍລິການໄປສົມຄູ່ກັບການພັດທະນາຊັບພະຍາກອນມະນຸດໃຫ້ມີຄຸນທາດການເມືອງໜັກແໜ້ນ ແລະ ມີຄຸນສົມບັດສິນທໍາປະຕິວັດ. ຂະຫຍາຍກໍາລັງແຮງສັງລວມຂອງອົງການຈັດຕັ້ງມະຫາຊົນ ແລະ ທົ່ວປວງຊົນໄດ້ຢ່າງກວ້າງຂວາງ. ເຊີດຊູສະຕິເຄົາລົບລະບຽບກົດໝາຍ, ນໍ້າໃຈເພິ່ງຕົນເອງ, ກຸ້ມຕົນເອງ ແລະ ສ້າງຄວາມເຂັ້ມແຂງດ້ວຍຕົນເອງຂອງພະນັກງານ, ສະມາຊິກພັກ, ທະຫານ, ຕໍາຫຼວດ ແລະ ປະຊາຊົນບັນດາເຜົ່າກໍ່ໄດ້ຮັບການປັບປຸງດີຂຶ້ນ, ຂົງເຂດວັດທະນະທໍາ-ສັງຄົມ ໄດ້ຮັບການພັດທະນາເປັນຢ່າງດີຕິດພັນກັບການສົ່ງເສີມມູນເຊື້ອນໍ້າໃຈຮັກຊາດ, ຮັກລະບອບໃໝ່ຢ່າງແຂງແຮງ.

ກອງປະຊຸມໃຫຍ່ເປັນເອກະສັນກັນຮັບຮອງເອົາຄາດໝາຍສູ້ຊົນແຕ່ ນີ້ເຖິງປີ 2015 ເຊິ່ງມີເນື້ອໃນດັ່ງລຸ່ມນີ້:

1) ປັບປຸງລະບົບການເມືອງໃຫ້ເຂັ້ມແຂງ, ຕິດພັນກັບການເສີມຂະຫຍາຍປະຊາທິປະໄຕໃນທຸກລະດັບໄປຄຽງຄູ່ກັບການເພີ່ມທະວີການຄຸ້ມຄອງລັດ-ຄຸ້ມຄອງສັງຄົມດ້ວຍກົດໝາຍໃຫ້ເຂັ້ມງວດ, ປັບປຸງ ແລະເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນໃນທົ່ວສັງຄົມ, ປຸກບັນຍາກາດແຫ່ງການບົບຕົວພັດທະນາຕົນເອງໃນທົ່ວສັງຄົມໃຫ້ເປັນຂະບວນຟົດຟື້ນ. ເອົາໃຈໃສ່ກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານໃຫ້ໄດ້ 20%ຕໍ່ປີ, ຂະຫຍາຍສະມາຊິກພັກ8%ຕໍ່ປີ. ສືບຕໍ່ສູ້ຊົນປະຕິບັດຂໍ້ແຂ່ງຂັນຕ່າງໆຂອງອົງການຈັດຕັ້ງແນວລາວສ້າງຊາດ, ບັນດາອົງການມະຫາຊົນໃຫ້ໄດ້ກວ່າເຄິ່ງໜຶ່ງຂຶ້ນໄປ.

2) ສູ້ຊົນເຮັດໃຫ້ເສດຖະກິດຂະຫຍາຍຕົວໄວ ແລະ ໝັກແໜ້ນມີອັດຕາເພີ່ມຂຶ້ນ-ນຂອງ GDP ສະເລ່ຍບໍ່ຕ່ຳກວ່າ 12,5%/ປີ, ລາຍຮັບສະເລ່ຍ 1.000 ໂດລາຕໍ່ຄົນ-ນຕໍ່ປີ, ລາຍຮັບງົບປະມານໃຫ້ບັນລຸ 282,8 ຕື້ກີບ, ກວມເອົາ 5-10%ຕໍ່ປີຂອງ GDP; ຄອບຄົວທຸກຍາກໃຫ້ຍັງເຫຼືອບໍ່ເກີນ 10% ໃນປີ 2015. ໂຄງປະກອບກະສິກຳ-ປ່າໄມ້ ມີຄວາມສົມເຫດສົມຜົນ, ຜູ້ປະກອບການຂະໜາດນ້ອຍ, ຂະໜາດກາງຂະຫຍາຍຕົວແຂງແຮງ, ເຮັດສຳເລັດໂດຍພື້ນຖານການຈັດສັນບ້ານໂຮມບ້ານນ້ອຍເປັນບ້ານໃຫຍ່ ແລະການຈັດສັນອາຊີບຄົງທີ່ໃຫ້ປະຊາຊົນ ເຮັດໃຫ້ການຜະລິດສິນຄ້າຂອງປະຊາຊົນຂະຫຍາຍຕົວເປັນຂະບວນເດັ່ນຊັດ.

3) ສູ້ຊົນແກ້ໄຂບັ-ນດາປະກົດການຫຍໍ້ທໍ້ ໃນກົງຈັກການຈັດຕັ້ງ, ຖັນ ແຖວພະນັກງານ ແລະ ສັງຄົມ ໃຫ້ໄດ້ໂດຍພື້ນຖານ, ຮັບປະກັນໃຫ້ສັງຄົມມີຄວາມສະຫງົບ, ປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

4) ສູ້ຊົນໃຫ້ເດັກທຸກຄົນໄດ້ເຂົ້າໂຮງຮຽນ, ທຸກເມືອງສາມາດປະກາດ ລຶບລ້າງເມືອງຈົບຊັ້ນປະຖົມ, ປັບປຸງຄຸນນະພາບການສຶກສາໃຫ້ສູງຂຶ້ນເທື່ອລະກ້າວ, ປະຊາຊົນໄດ້ຮັບການບໍລິການສຸຂະພາບຢ່າງທົ່ວເຖິງ, ລະດັບຄວາມແຕກໂຕນລະຫວ່າງຕົວເມືອງ ແລະ ເຂດທົ່ງພຽງກັບເຂດພູດອຍ ແລະ ລະຫວ່າງເຜົ່າໃຫ້ຫຼຸດລົງ, ເຮັດໃຫ້ທຸກຄົນ, ທຸກພື້ນທີ່, ທຸກເຜົ່າໄດ້ຮັບຜົນປະໂຫຍດຈາກຜົນສຳເລັດລວມຂອງການພັດທະນາ.

5) ມໍລະດົກດ້ານວັດທະນະທຳ, ຮີດຄອງປະເພນີອັນດີງາມທີ່ເປັນເອກະລັກຂອງທ້ອງຖິ່ນ, ຂອງເຜົ່າໄດ້ຮັບການປົກປັກຮັກສາ ແລະ ເສີມຂະຫຍາຍ; ປະຊາຊົນສ່ວນໃຫຍ່ໄດ້ເຂົ້າເຖິງແຫຼ່ງຂ່າວສານອັນຈຳເປັນດ້ວຍຫຼາຍຊ່ອງທາງທີ່ເໝາະສົມ.

6) ຄຸ້ມຄອງຄົນ-ເຂົ້າອອກເມືອງ ແລະແຮງງານຕ່າງປະເທດໃຫ້ໄດ້ຕາມລະບຽບກົດໝາຍໂດຍພື້ນຖານ; ປັບປຸງກົນໄກບໍລິການຜ່ານແດນ ແລະ ຍົກລະດັບການບໍລິການຂອງດ່ານສາກົນພູເກືອ ໃຫ້ມີປະສິດທິພາບສູງ ໂດຍສອດຄ່ອງກັບກົນໄກບູລິມະສິດພິເສດຂອງສາມຫຼ່ຽມພັດທະນາ, ເສີມຂະຫຍາຍບົດບາດຂອງແຂວງອັດຕະປື ໃຫ້ກາຍເປັນໜຶ່ງໃນຈຸດໃຈກາງເຊື່ອມໂຍງຂອງເຂດສາມຫຼ່ຽມພັດທະນາ ແລະ ກັບອະນຸພາກພື້ນ.

ການຮັບຮອງເອົາບັນດາຄາດໝາຍສູ້ຊົນເຫຼົ່ານັ້ນແມ່ນຖືກຕ້ອງຕາມກົດລະບຽບ, ຄຳສັ່ງຂອງຂັ້ນເທິງ, ຄວາມຮຽກຮ້ອງຕ້ອງການກໍ່ຄືຄວາມມຸ້ງຫວັງຂອງປະຊາຊົນບັນດາເຜົ່າ ແລະ ສອດຄ່ອງກັບສະພາບຄວາມເປັນຈິງຂອງແຂວງອັດຕະປືອີກດ້ວຍ.

2. ກອງປະຊຸມໄດ້ຮັບຟັງການປະກອບຄຳຄິດຄຳເຫັນ, ຄຳອວຍພອນຂອງຜູ້ຕາງໜ້າຄະນະພັກແຂວງຈຳປາສັກ,ແຂວງສາລະວັນ, ແຂວງເຊກອງ, ບັນດາອົງເຂດຕ່າງໆ ແລະ ຄອບຄົວຕົວແບບຈຳນວນໜຶ່ງທີ່ໄດ້ປະກອບສ່ວນເຮັດໃຫ້ກອງປະຊຸມມີບັນຍາກາດຟົດຟື້ນ, ມີເນື້ອໃນອຸດົມສົມບູນ ແລະ ປະສົບຜົນສຳເລັດຕາມລະດັບຄາດໝາຍທີ່ໄດ້ວາງໄວ້.

3. ກອງປະຊຸມໃຫຍ່ໄດ້ດຳເນີນການປ່ອນບັດເລືອກຕັ້ງເອົາຄະນະບໍລິ ຫານງານພັກແຂວງຊຸດທີ IX ຖືກຕາມຫຼັກການ ແລະ ກົດລະບຽບຂອງພັກ, ເຊິ່ງມີບຸກຄະລາກອນອອກຮັບສະໝັກເລືອກຕັ້ງ 32 ສະຫາຍ, ຍິງ 5 ສະຫາຍ. ໃນນັ້ນ ໄດ້ເລືອກຕັ້ງເອົາຄະນະບໍລິຫານງານພັກແຂວງ 27 ສະຫາຍ, ຍິງ 4 ສະຫາຍຄື: (ຈານວນບັດ ແຈກຢາຍມີ 157 ບັດ, ບັດຖືກຕ້ອງ 157 ບັດ ), ຜົນການປ່ອນບັດເລືອກຕັ້ງມີດັ່ງນີ້:

1) ສະຫາຍ ດຣ ຄຳພັນ ພົມມະທັດ.
2) ສະຫາຍ ນ ຫວັດສະດີ ໂຄດໂຍທາ.
3) ສະຫາຍ ຄຳພອນ ໝອກເມືອງຊຳ.
4) ສະຫາຍ ພອນສະໄໝ ມຽງລາວັນ.
5) ສະຫາຍ ແຄນທອງ ສີສຸວົງ.
6) ສະຫາຍ ບຸນໄຊ ຄຳມະນີວົງ.
7) ສະຫາຍ ສົມບູນ ຈັນທະມາດ.
8) ສະຫາຍ ເລັດ ໄຊຍະພອນ.

9) ສະຫາຍ ພັອ ຈັນທະໜາ ກົມມະເມືອງ.

10) ສະຫາຍ ສິມຣັກ ກອງບົວຄຳ.

11) ສະຫາຍ ບຸນມີ ບຸບຜາສະຫວັນ.

12) ສະຫາຍ ສີສະຫວັນ ຈັນທະໄພບູນ.

13) ສະຫາຍ ຄຳບຸນ ດວງພະບາງ.

14) ສະຫາຍ ຫວັດສະດີ ຂຸມເພັດສະວິງ.

15) ສະຫາຍ ບຸນຮຽນ ແກ້ວບົວພາດ.

16) ສະຫາຍ ນ ບຸນນານ ບຸນນະແສງ.

17) ສະຫາຍ ພັອ ສິມຄິດ ແກ້ວພິມມາ.

18) ສະຫາຍ ອຸ່ນຫຼ້າ ໄຊຍະສິດ.

19) ສະຫາຍ ນ ມີນາພອນ ໄຊສົມພູ.

20)ສະຫາຍ ເພັດມີໄຊ ຄຳພັກດີ.

21) ສະຫາຍ ສຸກໃຈ ສິນລະປະ.

22)ສະຫາຍ ດຣ ນ ພູວັນລະມາລີ ພົມມະສານ.

23)ສະຫາຍ ທະນູໄຊ ບັນຊາລິດ.

24)ສະຫາຍ ບຸນທຽນ ວົງພູທອນ.

25)ສະຫາຍ ເພັດແກ້ວ ເຮືອງປັນຍາ.

26)ສະຫາຍ ສຸກສະໄໝ ຈັນທະມາດ.

27)ສະຫາຍ ບຸນທະມາລີ ໝັ້ນອານົງ.

+ ກອງປະຊຸມຄັ້ງປະຖົມມະລຶກຂອງຄະນະບໍລິຫານງານພັກແຂວງ ຊຸດທີ IX ໄດ້ເລືອກຕັ້ງ ເອົາຄະນະ ປະຈຳພັກແຂວງ 9 ສະຫາຍຄື:

1) ສະຫາຍ ດຣ ຄຳພັນ ພົມມະທັດ
2) ສະຫາຍ ນ ຫວັດສະດີ ໂຄດໂຍທາ
3) ສະຫາຍ ຄຳພອນ ໝອກເມືອງຊຳ
4) ສະຫາຍ ພອນສະໄໝ ມຽງລາວັນ
5) ສະຫາຍ ແຄນທອງ ສີສຸວົງ
6) ສະຫາຍ ບຸນໄຊ ຄຳມະນີວົງ
7) ສະຫາຍ ສິມບູນ ຈັນທະມາດ
8) ສະຫາຍ ເລັດ ໄຊຍະພອນ
9) ສະຫາຍ ພັອ ຈັນສະໜາ ກົມມະເມືອງ.

+ ກອງປະຊຸມຄັ້ງປະຖົມມະລຶກຂອງອົງຄະນະພັກແຂວງ ໄດ້ເຫັນດີ ເປັນເອກະພາບກັນ:

- ເລືອກຕັ້ງເອົາສະຫາຍ ດຣ ຄຳພັນ ພົມມະທັດ ເປັນເລຂາຄະນະບໍ ລິຫານງານພັກແຂວງ.
- ເລືອກຕັ້ງເອົາສະຫາຍ ນ ຫວັດສະດີ ໂຄດໂຍທາ ເປັນຮອງເລຂາ ຄະນະບໍລິຫານງານພັກແຂວງ.
- ເລືອກຕັ້ງເອົາສະຫາຍ ພອນສະໄໝ ມຽງລາວັນ ເປັນປະທານ ກວດກາແຂວງ.
- ເລືອກຕັ້ງເອົາສະຫາຍ ອໍລະທັນ ລົມທະວົງ ເປັນຮອງປະທານ ກວດກາແຂວງຜູ້ທີ 1.
- ເລືອກຕັ້ງເອົາສະຫາຍ ໄກສອນ ສຸລິວົງ ເປັນຮອງປະທານກວດກາແຂວງຜູ້ທີ 2.

4. ກອງປະຊຸມໃຫຍ່ໄດ້ປ່ອນບັດເລືອກຕັ້ງເອົາຜູ້ແທນສົມບູນເຂົ້າຮ່ວມ ກອງປະຊຸມໃຫຍ່ ຄັ້ງທີ IX ຂອງສູນກາງພັກ ຈຳນວນ 12 ສະຫາຍຄື:

1) ສະຫາຍ ນ ຫວັດສະດີ ໂຄດໂຍທາ.
2) ສະຫາຍ ຄຳພອນ ໝອກເມືອງຊຳ.

3) ສະຫາຍ ພອນສະໄໝ ມຽງລາວັນ.

4) ສະຫາຍ ບຸນໄຊ ຄຳມະນີວົງ.

5) ສະຫາຍ ສິມຣັກ ກອງບົວຄຳ.

6) ສະຫາຍ ສິມບູນ ຈັນທະມາດ.

7) ສະຫາຍ ຄຳບຸນ ດວງພະບາງ.

8) ສະຫາຍ ເລັດ ໄຊຍະພອນ.

9) ສະຫາຍ ພັອ ຈັນສະໝາ ກົມມະເມືອງ.

10) ສະຫາຍ ນ. ບຸນນານ ບຸນຍະແສງ.

11) ສະຫາຍ ບຸນຮຽນ ແກ້ວບົວພາດ.

12) ສະຫາຍ ພັອ ສີມຄິດ ແກ້ວພິມມາ.

- ກອງປະຊຸມຍັງໄດ້ຄັດເລືອກເອົາຜູ້ແທນສຳຮອງ ເຂົ້າຮ່ວມກອງ ປະຊຸມໃຫຍ່ຄັ້ງທີ IX ຂອງສູນກາງພັກ ຈຳນວນ 02 ສະຫາຍຄື:

1) ສະຫາຍ ບົວໄລ ກົມມະສິດ.

2) ສະຫາຍ ມີນາພອນ ໄຊສົມພູ.

5. ກອງປະຊຸມໃຫຍ່ໄດ້ຮັບຟັງການໂອ້ລົມຂອງສະຫາຍ ສົມສະຫວາດ ເລັ່ງສະຫວັດ ກຳມະການກົມການເມືອງສູນກາງພັກ, ຮອງນາຍົກລັດຖະມົນຕີ, ຜູ້ປະຈຳການລັດຖະບານແຫ່ງ ສປປ ລາວ, ເຊິ່ງສະຫາຍໄດ້ເນັ້ນໜັກຫຼາຍບັນຫາໂດຍສະ ເພາະແມ່ນການຂະຫຍາຍເສດຖະກິດ-ສັງຄົມໃຫ້ແຂງ ແຮງຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ການຈັດສັນທີ່ຢູ່ອາໄສ, ຈັດສັນອາຊີບ, ຈັດສັນເຂດການຜະລິດ, ຢຸດຕິການຖາງປ່າເຮັດໄຮ່ປູກເຂົ້າແບບເລື່ອນລອຍໃຫ້ໄດ້ຢ່າງຊິ້ນເຊີງ, ດຳເນີນວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບທົ່ວປວງຊົນຮອບດ້ານ ເຮັດໃຫ້ທົ່ວສັງຄົມມີຄວາມສະຫງົບສຸກ ແລະ ມີຄວາມເປັນລະບຽບຮຽບຮ້ອຍ, ບັນຫາທີ່ສຳຄັນ ແລະ ຕັດສິນກວ່າໝູ່ແມ່ນການພັດທະນາຊັບພະຍາກອນມະນຸດ, ການບຳລຸງກໍ່ສ້າງຄົນຕິດພັນກັບການປັບປຸງບູລະນະລະບົບກົງຈັກການຈັດຕັ້ງໃຫ້ໜັກແໜ້ນເຂັ້ມແຂງ, ຮັບປະກັນສ້າງພັກໃຫ້ປອດໃສຂາວສະອາດໂດຍຖື ເອົາການກໍ່ສ້າງໜ່ວຍພັກແຂງ-ຮູ້ນຳພາຮອບດ້ານ ເປັນບັນຫາສຳຄັນ, ສືບຕໍ່ຂະຫຍາຍການສຶກສາ, ສາທາລະນະສຸກ, ແຮງງານ-ສະຫວັດດີການສັງຄົມ ຕະຫຼອດຮອດວຽກງານຖະແຫຼງຂ່າວຕິດພັນກັບການສ້າງບ້ານວັດທະນະທຳ, ຄອບຄົວວັດທະນະທຳໃຫ້ດີຂຶ້ນເທື່ອລະກ້າວ.

6. ກອງປະຊຸມຍັງໄດ້ຮຽກຮ້ອງມາຍັງພະນັກງານ, ສະມາຊິກພັກ, ນາຍ ແລະ ພົນທະຫານ, ນາຍ ແລະ ພົນຕຳຫຼວດ ຕະຫຼອດຮອດປະຊາຊົນບັນດາເຜົ່າໃນທົ່ວແຂວງ, ຈົ່ງເຊີດຊູນ້ຳໃຈຮັກຊາດ, ຈິດໃຈເອກະລາດ, ເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ສາມັກຄີກັນ ແລະ ດຸໝັ່ນພາກພຽນ, ຂຸດຄົ້ນກຳລັງແຮງສັງລວມ, ນຳໃຊ້ຄວາມສາມາດບົ່ມຊ້ອນພາຍໃນແຂວງ ເພື່ອມາພັດທະນາແຂວງອັດຕະປື ກ້າວຂຶ້ນດ້ວຍບາດກ້າວອັນໜັກແໜ້ນ.

**ອັດຕະປື, ວັນທີ 23 ພະຈິກ 2010**

**ກອງປະຊຸມໃຫຍ່ຄັ້ງທີ IX ຂອງອົງຄະນະພັກແຂວງ**